Australian Human Rights Commission
everyone, everywhere, everyday

# ການຍື່ນຄຳຮ້ອງຮຽນ

ຄະນະກຳມາທິການສິດທິມະນຸດແຫ່ງປະເທດອອສເຕຣເລັຍແມ່ນອົງກອນອິສະຣະເຊິ່ງທຳການສອບສວນແລະແກ້ໄຂເລື່ອງຄຳຮ້ອງຮຽນກ່ຽວກັບການແບ່ງແຍກທີ່ຜິດກົດໝາຍ ດ້ານເພດ, ເຊື້ອຊາດ, ຄວາມພິການ ແລະ ອາຍຸ, ການແບ່ງແຍກ ILO III ແລະການຜ່າຝືນສິດທິມະນຸດ.

## ສິ່ງທີ່ທ່ານສາມາດຮ້ອງຮຽນມາຫາພວກເຮົາໄດ້ມີດັ່ງນີ້

- ***ແບ່ງແຍກເລື່ອງເພດ*** ລວມເຖິງການກົດຂີ່ຂົ່ມເຫັງທາງເພດແລະການແບ່ງແຍກທີ່ອີງໃສ່ ເພດ, ຄວາມເປັນຍິງ-ຊາຍ, ຖານະທາງເພດສິນ, ການຖືພາ, ຖານະການແຕ່ງງານຫຼືຄວາມສຳພັນ, ການໃຫ້ລູກກິນນົມແມ່, ຄວາມຮັບຜິດຊອບດ້ານຄອບຄົວ ແລະ ການໂນ້ມທາງເພດ,
- ***ແບ່ງແຍກເລື່ອງຄວາມພິການ*** ລວມເຖິງການແບ່ງແຍກທີ່ອີງໃສ່ ທາງຮ່າງກາຍ, ມັນສະໝອງ, ຄວາມຮູ້ສຶກທາງປະສາດ, ຄວາມພິການທາງການສຶກສາຮ່ຳຮຽນແລະທາງຈິດໃຈ; ພະຍາດຫຼືການເຈັບປ່ວຍ; ອາການທາງສຸຂະພາບ; ບາດເຈັບຈາກການເຮັດວຽກ; ຄວາມພິການໃນອະດີດ ປັດຈຸບັນແລະອະນາຄົດ; ແລະເຄື່ອງອຸປະກອນຊ່ວຍຄວາມພິການ; ສັດທີ່ໃຫ້ຄວາມຊ່ວຍເຫຼືອຫຼືທີ່ກ່ຽວພັນກັບບຸກຄົນທີ່ມີຄວາມພິການ.
- ***ແບ່ງແຍກເລື່ອງເຊື້ອຊາດ*** ລວມເຖິງການກຽດຊັງເຊື້ອຊາດແລະການແບ່ງແຍກໂດຍອີງໃສ່ເຊື້ອຊາດ, ສີຜິວ, ເຊື້ອສາຍ, ສັນຊາດຫຼືຊົນເຜົ່າ ແລະ ມີຖານະເປັນຄົນຍ້າຍຖິ່ນຖານເຂົ້າມາ.
- ***ແບ່ງແຍກເລື່ອງອາຍຸ*** ລວມເຖິງການແບ່ງແຍກທີ່ອີງໃສ່ວ່າເປັນຄົນອາຍຸໜຸ່ມໂພດຫຼືແກ່ໂພດ.
- ***ແບ່ງແຍກເລື່ອງ ILO III*** ລວມເຖິງການແບ່ງແຍກດ້ານການເຮັດວຽກທີ່ອີງໃສ່ ສາສະໜາ, ປະຫວັດເຄີຍຕ້ອງໂທດ, ຫ້າວຫັນໃນກິດຈະກຳຍູນຽນ, ແນວຄິດການເມືອງ ແລະ ພື້ນຖານສັງຄົມ.
- ***ສິດທິມະນຸດ*** ລວມເຖິງການກະທຳໂດຍຫຼືຕາງໜ້າໃຫ້ລັດຖະບານກາງທີ່ຖືກກ່າວຫາວ່າຜ່າຝືນ ຕາສານຂອງສິດທິມະນຸດສາກົນສະເພາະ, ເຊັ່ນສົນທິສັນຍາສາກົນດ້ານສິດທິພົນລະເຮືອນແລະການເມືອງ, ສົນທິສັນຍາດ້ານສິດທິເດັກແລະສົນທິສັນຍາດ້ານບຸກຄົນທີ່ມີຄວາມພິການ.

ທ່ານສາມາດຍື່ນຄຳຮ້ອງຮຽນໄດ້ບໍ່ວ່າທ່ານຈະຢູ່ແຫ່ງໃດໃນອອສເຕຣເລັຍແລະທ່ານຈະບໍ່ຕ້ອງເສັຍຄ່າໃດໆໃນການຍື່ນຄຳຮ້ອງຮຽນ. ຂັ້ນຕອນການຮ້ອງຮຽນໄດ້ຂຽນແຈ້ງໄວ້ດັ່ງຂ້າງລຸ່ມນີ້. .

## ການສອບຖາມ

- ຖ້າທ່ານບໍ່ແນ່ໃຈວ່າຈະສາມາດຍື່ນຄຳຮ້ອງຮຽນກ່ຽວກັບບາງຢ່າງຂຶ້ນໄປໄດ້ຫຼືບໍ່, ທ່ານສາມາດຕິດຕໍ່ຫາພະແນກບໍລິການສະໜອງຂໍ້ມູນແຫ່ງຊາດຂອງຄະນະກຳມາທິການ ໂດຍໂທເລກ **1300 656 419** ຫຼືທາງອີເມວໄປທີ່ infoservice@humanrights.gov.au

- ເຮົາສາມາດສົ່ງແບບຟອມການຍື່ນຟ້ອງໄປໃຫ້ທ່ານເພື່ອເປັນການເລີ່ມຕົ້ນ.
- ຖ້າເຮົາບໍ່ສາມາດຊ່ວຍທ່ານໄດ້, ເຮົາກໍຈະພະຍາຍາມສົ່ງທ່ານຕໍ່ໄປຫາໃຜຜູ້ໜຶ່ງທີ່ສາມາດຊ່ວຍໄດ້.

## ການຍື່ນຄໍາຮ້ອງຮຽນ

- ຄໍາຮ້ອງຮຽນຕ້ອງເຮັດເປັນລາຍລັກອັກສອນ. ທ່ານສາມາດຕື່ມຟອມຮ້ອງຮຽນນີ້ແລ້ວສົ່ງກັບທາງໄປສະນີຫຼືແຟັກສ໌ກັບມາຫາພວກເຮົາ ຫຼື ບໍ່ດັ່ງນັ້ນ ທ່ານກໍສາມາດຍື່ນຄໍາຮ້ອງຮຽນທາງອອນລາຍໄປທີ່ເວັບໄຊ້ຂອງເຮົາທີ່ [www.humanrights.gov.au](http://www.humanrights.gov.au).
- ທ່ານສາມາດຍື່ນຄໍາຮ້ອງຮຽນເປັນພາສາຂອງທ່ານແລະເຮົາກໍສາມາດຊ່ວຍຂຽນຄໍາຮ້ອງຮຽນຂອງທ່ານລົງໄດ້ຖ້າຈໍາເປັນ.
- ທ່ານບໍ່ຈໍາເປັນຕ້ອງມີທະນາຍຄວາມໃນການຍື່ນຄໍາຮ້ອງຮຽນ.
- ຖ້າເຮົາບໍ່ສາມາດຮັບຄໍາຮ້ອງຮຽນຂອງທ່ານໄດ້, ເຮົາຈະອະທິບາຍໃຫ້ທ່ານຊາບວ່າຍ້ອນຫຍັງ.

## ການສອບສວນ

- ເຮົາຈະພົວພັນຫາທ່ານເພື່ອໂອ້ລົມເລື່ອງການຮ້ອງຮຽນຂອງທ່ານແລະເຮົາອາດຈະຂໍໃຫ້ທ່ານສະໜອງຂໍ້ມູນຕື່ມ.
- ໂດຍທົ່ວໄປແລ້ວ, ຄະນະກໍາມາທິການຈະພົວພັນຫາບຸກຄົນຫຼືອົງການທີ່ທ່ານເອົາເປັນປະເດັນຮ້ອງຮຽນແລະຈະເອົາສໍາເນົາການຮ້ອງຮຽນຂອງທ່ານໃຫ້ເຂົາເຈົ້າ. ພວກເຮົາອາດຈະຂໍໃຫ້ເຂົາເຈົ້າສະໜອງຂໍ້ມູນສະເພາະໃດໜຶ່ງ ແລະ/ຫຼື ໃຫ້ຕອບຕໍ່ຄໍາຮ້ອງຮຽນຂອງທ່ານ. ຂໍ້ມູນທີ່ສະໜອງມາໃຫ້ທາງຄະນະກໍາມາທິການອາດຈະມີຂໍ້ມູນສ່ວນຕົວ, ລວມທັງຂໍ້ມູນທີ່ມີຄວາມລະອັງ ກ່ຽວກັບຕົວທ່ານ.
- ໃນບາງກໍລະນີ, ເຮົາອາດຕັດສິນໃຈວ່າຈະບໍ່ສືບຕໍ່ດໍາເນີນການຮ້ອງຮຽນຂອງທ່ານ. ຖ້າເກີດເຫດການດັ່ງນີ້, ເຮົາກໍຈະອະທິບາຍໃຫ້ທ່ານຊາບວ່າຍ້ອນຫຍັງ.
- ເຮົາອາດຂໍໃຫ້ທ່ານພະຍາຍາມແກ້ໄຂບັນຫາຂອງການຮ້ອງຮຽນໂດຍການປະນີປະນອມກັນ.

## ການປະນີປະນອມ

- ການປະນີປະນອມໝາຍຄວາມວ່າເຮົາພະຍາຍາມຊ່ວຍທ່ານແລະບຸກຄົນຫຼືອົງກອນທີ່ເປັນປະເດັນຖືກທ່ານຮ້ອງຮຽນຂຶ້ນມານັ້ນໃຫ້ໄດ້ພົບວິທີທາງໃນການແກ້ໄຂບັນຫາ.
- ການປະນີປະນອມສາມາດເຮັດໄດ້ໂດຍການປະຊຸມເຊິ່ງໜ້າ ເຊິ່ງເອີ້ນວ່າ 'ປະຊຸມປະນີປະນອມ' ຫຼືຜ່ານການປະຊຸມທາງໂທລະສັບ. ໃນບາງກໍລະນີ, ການຮ້ອງຮຽນສາມາດແກ້ໄຂກັນໄດ້ໂດຍຜ່ານການລົມກັນທາງອີເມວຫຼືສົນທະນາຜ່ານຜູ້ໄກ່ເກັ່ຍ.
- ການຮ້ອງຮຽນສາມາດແກ້ໄຂໄດ້ຫຼາຍວິທີ. ຍົກຕົວຢ່າງ, ໂດຍການຂໍອະໄພ, ການປ່ຽນແປງນະໂຍບາຍ ຫຼື ການຊົດເຊີຍ.

## ຄວາມເປັນໄປໄດ້ໃນການຍື່ນເລື່ອງຂຶ້ນສານ – ການແບ່ງແຍກ ດ້ານເພດ, ຄວາມພິການ, ເຊື້ອຊາດແລະອາຍຸ

- ຄະນະກຳມາທິການບໍ່ມີອຳນາດຕັດສິນວ່າໄດ້ມີການແບ່ງແຍກທີ່ຜິດກົດໝາຍເກີດຂຶ້ນຫຼືບໍ່.
- ຖ້າການຮ້ອງຮຽນຂອງທ່ານແກ້ໄຂບໍ່ໄດ້ຫຼືຍຸດສະງັກໄປດ້ວຍເຫດຜົນບາງຢ່າງ, ທ່ານອາດຈະສາມາດຍື່ນເລື່ອງຂຶ້ນຕໍ່ສານ. ສານຈະຕັດສິນວ່າໄດ້ມີການແບ່ງແຍກທີ່ຜິດກົດໝາຍເກີດຂຶ້ນຫຼືບໍ່.
- ທ່ານມີເວລາ 60 ວັນນັບຈາກວັນທີ່ຄະນະກຳມາທິການຍຸຕິການຮ້ອງຮຽນຂອງທ່ານ ໃນການຍື່ນຄຳຮ້ອງຂຶ້ນຫາສານກາງເຄື່ອນທີ່ແຫ່ງປະເທດອອສເຕຣເລັຍ (Federal Circuit Court of Australia) ສານກາງແຫ່ງປະເທດອອສເຕຣເລັຍ (Federal Court of Australia).
- ຄະນະກຳມາທິການບໍ່ສາມາດນຳເລື່ອງຂຶ້ນສານແທນທ່ານຫຼືຊ່ວຍວ່າຄວາມໃຫ້ທ່ານໃນສານໄດ້.
- ທ່ານອາດຈະຢາກປຶກສາກັບທະນາຍຄວາມຫຼືບໍລິການດ້ານກົດໝາຍຖ້າວ່າທ່ານຢາກນຳເລື່ອງຍື່ນຟ້ອງຂຶ້ນສານ.

## ການຕັດສິນ/ການລາຍງານ – ການແບ່ງແຍກ ILO III ແລະສິດທິມະນຸດ

- ຖ້າວ່າການຮ້ອງຮຽນແກ້ໄຂບໍ່ໄດ້ຫຼືຍຸດສະງັກໄປຍ້ອນເຫດຜົນຢ່າງໃດໜຶ່ງ, ປະທານຂອງຄະນະກຳມາທິການອາດຈະຕັດສິນໄດ້ວ່າໄດ້ມີການແບ່ງແຍກ ILO III ຫຼືຝ່າຝືນສິດທິມະນຸດຫຼືບໍ່.
- ຖ້າປະທານພໍໃຈວ່າໄດ້ມີການແບ່ງແຍກຫຼືຝ່າຝືນສິດທິມະນຸດແທ້, ປະທານອາດຈະລາຍງານເລື່ອງຂຶ້ນໄປຫາ ລັດຖະມົນຕີກະຊວງຍຸຕິທຳຂອງລັດຖະບານກາງ. ຢູ່ໃນລາຍງານນັ້ນ, ປະທານຈະສະເໜີໃຫ້ມີການຊົດເຊີຍການເສັຍຫາຍຫຼືບາດເຈັບໃດໆທີ່ບຸກຄົນຜູ້ນັ້ນໄດ້ຮັບ. ລາຍງານນັ້ນອາດຈະຖືກຍື່ນເຂົ້າໄປໃນສະພາ.
- ຕົວຢ່າງຂອງການຕັດສິນຂອງປະທານກ່ຽວກັບການແບ່ງແຍກແລະສິດທິມະນຸດມີໄວ້ໃຫ້ເບິ່ງຢູ່ທີ່ເວັບໄຊ້ຂອງຄະນະກຳມາທິການ ທີ່ http://www.humanrights.gov.au/publications/reports-minister-under-ahrc-act.

## ຂ້ອຍຈະໄປຂໍຄວາມຊ່ວຍເຫຼືອໄດ້ຢູ່ໃສ?

ທີ່ຕິດຕໍ່ຫາ ຄະນະກຳມາທິການສິດທິມະນຸດແຫ່ງປະເທດອອສເຕຣເລັຍແມ່ນ:

**ໂທລະສັບ**
ບໍລິການສະໜອງຂໍ້ມູນແຫ່ງຊາດ: 1300 656 419
TTY: 1800 620 241
NRS 133 677
ແຟກສ໌: (02) 9284 9611

ຖ້າທ່ານຕ້ອງການນາຍພາສາທ່ານສາມາດໂທຫາເລກ **131 450** ແລະຂໍໃຫ້ເຂົາເຈົ້າຕໍ່ສາຍຫາຄະນະກຳມາທິການສິດທິມະນຸດໃຫ້.

ຖ້າທ່ານພິການຫູຫຼືມີບັນຫາດ້ານການຟັງ ທ່ານສາມາດຕິດຕໍ່ຫາພວກເຮົາໄດ້ໂດຍຜ່ານ TTY ທີ່ເລກໂທ 1800 620 241. ຖ້າທ່ານພິການຫູຫຼືມີບັນຫາເລື່ອງການຟັງຫຼືການປາກເວົ້າ ທ່ານກໍສາມາດຕິດຕໍ່ຫາພວກ

ເຮົາໄດ້ໂດຍຜ່ານ ບໍລິການສົ່ງຕໍ່ແຫ່ງຊາດ (NRS) ທີ່ເລກໂທ 133 677. ຖ້າທ່ານຕ້ອງການນາຍພາສາແບບ Auslan ເຮົາກໍສາມາດຈັດຫາໃຫ້ທ່ານໄດ້.

ຖ້າທ່ານຕາພິການຫຼືມີບັນຫາດ້ານສາຍຕາ ເຮົາກໍສາມາດໃຫ້ຂໍ້ມູນໃນຮູບແບບອື່ນໆໄດ້ຕາມຄຳຂໍ.

**ທາງໄປສະນີ**

GPO Box 5218
Sydney NSW 2001

**ທາງອອນລາຍ**
ອີເມວ: infoservice@humanrights.gov.au
ເວັບໄຊ໌: www.humanrights.gov.au

ທ່ານສາມາດຍື່ນຄຳຮ້ອງຮຽນທາງອອນລາຍໄດ້ໂດຍໄປທີ່
http://www.humanrights.gov.au/complaints/lodging-your-complaint.

## ຄຳແນະນຳທົ່ວໄປດ້ານກົດໝາຍ

ຖ້າທ່ານກຳລັງຄຶດວ່າຈະທຳການຮ້ອງຮຽນ ທ່ານອາດຈະຕ້ອງການຄຳແນະນຳທາງກົດໝາຍ. ໄດ້ມີສູນບໍລິການດ້ານກົດໝາຍແກ່ຊຸມຊົນທີ່ສາມາດໃຫ້ຄຳແນະນຳຟຣີກ່ຽວກັບການແບ່ງແຍກແລະກົດຂີ່ຂົ່ມເຫງ.

ທ່ານສາມາດຕິດຕໍ່ຫາພະແນກຊ່ວຍເຫຼືອດ້ານກົດໝາຍ (Legal Aid) ໄດ້ທີ່ (https://www.nationallegalaid.org/for-individuals/) ຫຼືສູນບໍລິການດ້ານກົດໝາຍຊຸມຊົນທີ່ໃກ້ບ້ານທ່ານທີ່ສຸດ (www.naclc.org.au/directory).

**ການປະກາດບໍ່ຮັບຜິດຊອບ: ຂໍ້ມູນທີ່ສະໜອງໃຫ້ໃນເຈ້ຍຂໍ້ມູນນີ້ແມ່ນມີເຈດຕະນາໃຫ້ໃຊ້ເປັນພຽງການຊີ້ແນະເທົ່ານັ້ນ. ຂໍ້ມູນນີ້ບໍ່ສາມາດນຳໃຊ້ແທນຄຳແນະນຳດ້ານກົດໝາຍໄດ້.**